ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ກົມຂົນສົ່ງ

ເລກທີ: 28884 /ກຂສ

ນະຄອນຫຼວງວຽງຈັນ, ວັນທີ: 21 ພະຈິກ 2022

## ແຈ້ງການເຊີນເຂົ້າຮ່ວມປະມູນ

| | |
|---|---|
| **ຊື່ໂຄງການ:** | ໂຄງການຂົນສົ່ງແບບຍືນຍົງໃນຕົວເມືອງນະຄອນຫຼວງວຽງຈັນ<br>Vientiane Sustainable Urban Transport Project (VSUTP) |
| **ຊື່ ແລະ ໝາຍເລກສັນຍາ:** | **VSUTP-NCB-SPC-2-2022;**<br>**ການບໍລິການລົດຖີບສາມລໍ້ໄຟຟ້າ E-Pedicabs ໃນເຂດໃຈກາງຕົວເມືອງ ນະຄອນຫລວງວຽງຈັນ** |
| **ກອງປະຊຸມກ່ອນເປີດຊອງປະມູນ:** | 12 ທັນວາ 2022 ເວລາ 09:00 ໂມງ (ເວລາໃນ ລາວ) |
| **ກຳນົດເວລາສົ່ງຊອງປະມູນ:** | 23 ທັນວາ 2022 ເວລາ 09:00 ໂມງ (ເວລາໃນ ລາວ) |

1. ລັດຖະບານແຫ່ງ ສປປ ລາວ ກຳລັງຈັດຕັ້ງປະຕິບັດ**ໂຄງການຂົນສົ່ງແບບຍືນຍົງໃນຕົວເມືອງ ນະຄອນຫລວງວຽງຈັນ (VSUTP).** ງົບປະມານພາຍໃນແມ່ນຈະຖືກນຳໃຊ້ເຂົ້າໃນການເບີກຈ່າຍເງິນພາຍໃຕ້ສັນຍາຂ້າງເທິງ. ການປະມູນຈະເປີດສຳລັບຜູ້ມີສິດເຂົ້າຮ່ວມພາຍໃຕ້ເງື່ອນໄຂຂອງຂະບວນການປະມູນຈັດຊື້ຢູ່ພາຍໃນປະເທດ.
2. ກອງຄຸ້ມຄອງການຂົນສົ່ງໃນຕົວເມືອງ ພະແນກໂຍທາທິການແລະຂົນສົ່ງນະຄອນຫລວງວຽງຈັນ ມີຈຸດປະສົງ ທີ່ຈະເຮັດສັນຍາສຳປະທານເຊົ່າລົດຖີບສາມລໍ້ໄຟຟ້າ (E-Pedicabs) ກັບຜູ້ປະກອບການທີ່ມີຄຸນວຸດທິ. ກອງຄຸ້ມຄອງການຂົນສົ່ງໃນຕົວເມືອງ ຈະໃຫ້ສິດແກ່ຜູ້ປະກອບການ ເພື່ອດຳເນີນການບໍລິການລົດຖີບສາມລໍ້ໄຟຟ້າ ໃນໃຈກາງຕົວເມືອງ ນະຄອນຫຼວງວຽງຈັນ.
3. ການປະມູນພາຍໃນ ຈະຈັດຂຶ້ນໂດຍໃຫ້ສອດຄ່ອງກັບລະບຽບການປະມູນແບບຂັ້ນຕອນດຽວ-ຊອງດຽວ ແລະ ເປີດໃຫ້ທຸກຄົນ ຜູ້ທີ່ມີສິດປະມູນ ສາມາດເຂົ້າຮ່ວມໄດ້ຕາມເງື່ອນໄຂທີ່ລະບຸໄວ້ໃນເອກະສານປະມູນ.
4. ມີແຕ່ຜູ້ທີ່ມີສິດເຂົ້າປະມູນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມແຂ່ງຂັນໄດ້ ແລະ ຕ້ອງມີຄຸນວຸດທິຕົ້ນຕໍ (ຜູ້ເຂົ້າປະມູນຕ້ອງປະກອບເອກະສານທີ່ເປັນຫລັກຖານສະແດງໃຫ້ເຫັນວ່າຕົນສາມາດສະໜອງຄວາມຕ້ອງການ ດ້ານປະສົບການ ແລະ ດ້ານການເງິນໄດ້, ເຊິ່ງເອກະສານດັ່ງກ່າວລວມມີ:
   ກ) ປະສົບການຕາມສັນຍາ: ຜູ້ເຂົ້າປະມູນຕ້ອງເຄີຍປະຕິບັດສັນຍາແບບດຽວກັນນີ້ ໃນຖານະເປັນຜູ້ປະກອບການຫຼັກ ໃນການດຳເນີນງານທີ່ຄ້າຍຄືກັນ 5 ປີ ຜ່ານມາ. ມູນຄ່າລວມ ບໍ່ໃຫ້ຫຼຸດ 1,000 ລ້ານກີບ;
   ຂ) ລາຍຮັບສະເລ່ຍຕໍ່ປີ: ຜູ້ເຂົ້າປະມູນ ຕ້ອງມີລາຍຮັບສະເລ່ຍຕໍ່ປີ ຕ່ຳສຸດ 1,500 ລ້ານກີບ ຄິດໄລ່ເປັນລາຍຮັບທັງໝົດຈາກການປະຕິບັດສັນຍາທີ່ຄ້າຍຄືກັນ ເຊິ່ງເປັນສັນຍາທີ່ປະຕິບັດສຳເລັດແລ້ວ ຫຼື ສັນຍາທີ່ພວມຈັດຕັ້ງປະຕິບັດຢູ່ ໃນໄລຍະ 5 ປີ;
   ຄ) ຜູ້ເຂົ້າປະມູນຕ້ອງມີຫຼັກຊັບ ຫຼື ສາມາດເຂົ້າເຖິງແຫລ່ງສິນເຊື່ອ, ວົງເງິນສິນເຊື່ອ, ແລະ ການເງິນອື່ນໆ ຢ່າງພຽງພໍກັບຄວາມຕ້ອງການກະແສເງິນສົດ ໃນນີ້ເທົ່າກັບ: 1,000 ລ້ານກີບ;
   ງ) ຜູ້ເຂົ້າປະມູນ ຕ້ອງເປັນຜູ້ດຳເນີນທຸລະກິດຢູ່ໃນ ສປປ ລາວ ແລະ ສາມາດ ໃຫ້ບໍລິການ, ຮັບປະກັນ, ບຳລຸງຮັກສາ, ສ້ອມແປງ ແລະ ມີສາງເກັບຮັກສາອາໄຫຼ່ ລວມເຖິງພັນທະອື່ນທີ່ກຳນົດໄວ້ໃນເງື່ອນໄຂຂອງສັນຍາ ແລະ/ຫຼື ຂໍ້

ກຳນົດເຕັກນິກ.

ເງື່ອນໄຂຄຸນວຸດທິ ໄດ້ອະທິບາຍໄວ້ຢ່າງຈະແຈ້ງ ຢູ່ໃນເອກະສານປະມູນ.

5. ຜູ້ທີ່ສົນໃຈເຂົ້າຮ່ວມການປະມູນສາມາດຂໍຂໍ້ມູນເພີ່ມເຕີມ ແລະ ກວດກາເອກະສານການປະມູນຕາມທີ່ຢູ່ລຸ່ມນີ້ ເລີ່ມແຕ່ເວລາ 8:00 ໂມງເຊົ້າ ຫາ 17:00 ໂມງແລງ, ວັນຈັນ ເຖິງ ວັນສຸກ.

| | | |
|---|---|---|
| ຮຽນ | : | **ປອ. ບຸນຕາ ອ່ອນນະວົງ ຫົວໜ້າ ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະ ຂົນສົ່ງ** |
| ທີ່ຢູ່ | : | ຖະໜົນລ້ານຊ້າງ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ |
| ຊັ້ນ/ເບີຫ້ອງ | : | ຊັ້ນ 1 ຕຶກກະຊວງໂຍທາທິການ ແລະ ຂົນສົ່ງ |
| ແຂວງ/ນະຄອນ | : | ນະຄອນຫຼວງວຽງຈັນ |
| ລະຫັດເຂດໄປສະນີ | : | N/A |
| ປະເທດ | : | ສປປ ລາວ |
| ເບີໂທລະສັບ | : | **+856-21-415563** |
| E-mail | : | bounta_ov@yahoo.com |

6. ເອກະສານການປະມູນເປັນພາສາລາວ ແລະ ພາສາອັງກິດ ສາມາດຊື້ໄດ້ໂດຍຜູ້ປະມູນທີ່ມີຄວາມສົນໃຈຍື່ນເຈດຈຳນົງເປັນລາຍລັກອັກສອນໄປຍັງທີ່ຢູ່ໃຫ້ໄວ້ຂ້າງເທິງ ແລະ ຄ່າທຳນຽມແມ່ນ ໜຶ່ງຮ້ອຍຫ້າສິບໂດລາສະຫະລັດ (150 ໂດລາສະຫະລັດ). ວິທີການສຳລະເງິນແມ່ນຈະເປັນຮູບແບບເງິນສົດ. ເອກະສານປະມູນແມ່ນສາມາດເອົາໄດ້ຈາກທີ່ຢູ່ຂ້າງເທິງ.
7. ເຊີນຜູ້ຕາງໜ້າຜູ້ເຂົ້າຮ່ວມປະມູນເຂົ້າຮ່ວມກອງປະຊຸມກ່ອນການເປີດຊອງປະມູນໃນວັນທີ 12 ທັນວາ 2022 ເວລາ 09:00 ໂມງ ຕາມທີ່ລະບຸໄວ້ໃນເອກສານການປະມູນ. ຈຸດປະສົງຂອງກອງປະຊຸມນີ້ແມ່ນເພື່ອໃຫ້ຄວາມຈະແຈ້ງຕໍ່ບັນຫາຕ່າງໆຂອງການປະມູນ ແລະຕອບຄຳຖາມທີ່ຜູ້ເຂົ້າປະມູນມີຄວາມສົນໃຈ.
8. ຊອງປະມູນຈະຕ້ອງຍື່ນຢູ່ສະຖານທີ່ກຳນົດໄວ້ຂ້າງເທິງນີ້ ກ່ອນຫລືຕົງເວລາ 9:00 ໂມງ ຂອງວັນທີ 23 ທັນວາ 2022. ຊອງປະມູນແບບເອເລັກໂຕຣນິກຈະບໍ່ຮັບພິຈາລະນາ. ຊອງປະມູນທີ່ຍື່ນຊ້າກ່ວາກຳນົດ ຈະຖືກປະຕິເສດບໍ່ຮັບເອົາພິຈາລະນາ. ຊອງປະມູນທຸກຊອງຈະເປີດໃນເວລາຕໍ່ມາເວລາ 9:00 ໂມງ ຊ້ອງໜ້າບັນດາຕົວແທນຜູ້ເຂົ້າປະມູນທີ່ຕ້ອງການເຂົ້າຮ່ວມຢູ່ສະຖານທີ່ກຳນົດໄວ້ຂ້າງເທິງນີ້.
9. ທຸກຊອງປະມູນຈະຕ້ອງມີໃບແຈ້ງຮັບປະກັນການປະມູນຄັດຕິດມາພ້ອມຕາມທີ່ເອກະສານປະມູນໄດ້ກຳນົດໄວ້.
10. ເຈົ້າຂອງໂຄງການຈະບໍ່ຮັບຜິດຊອບຄ່າໃຊ້ຈ່າຍໃດໆ ກ່ຽວກັບການກະກຽມ ແລະການຍື່ນຊອງປະມູນຂອງທ່ານ

ຮຽນມາດ້ວຍຄວາມນັບຖື.

**ຮຫົວໜ້າກົມ**

ກະຊວງໂຍທາທິການ ແລະ ຂົນສົ່ງ
ກົມຂົນສົ່ງ

**ບຸນຍະວັດ ນິລະໄຊຍ໌**